## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 30 ມິຖຸນາ 2024 (06-30-2024)

---

### ອະທິຖານເພື່ອປະເທດຊາດຂອງພວກເຮົາ

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຊົງອວຍພຣະພອນແກ່ບັນດາຜູ້ທີ່ສແວງຫາພຣະອົງດ້ວຍຄວາມຖ່ອມຕົວ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ທ່ານສາມາດຮຽນຮູ້ຫຼາຍຢ່າງຈາກໂຕໝາ. ຂ້ອຍໄດ້ເຮັດ(ຮຽນຈາກໂຕໝາ). ທັມມະຊາດຂອງໂຕໝາຄື: ຄວາມສັດຊື່, ຄວາມໄວ້ວາງໃຈ, ແລະການເພິ່ງພາອາສັຍ. ເຈົ້າຂອງໝາຈຳນວນຫຼາຍຖືວ່າໝາຂອງພວກເຂົາເຈົ້າເປັນສະມາຊິກທີ່ເຊື່ອຖືໄດ້ຂອງຄອບຄົວຂອງພວກເພິ່ນຊຶ່ງເປັນບັນດາຜູ້ທີ່ຖ່ອມຕົວຂຶ້ນກັບນາຍຂອງຕົນ ເພື່ອຕອບສນອງຄວາມຕ້ອງການທັງໝົດຂອງພວກເຂົາເຈົ້າ. ໝາຂອງຂ້າພະເຈົ້າຊື່ **ສະປັດ**(Spot)ເປັນຕົວຢ່າງສຳລັບຂ້າພະເຈົ້າເຖິງຄວາມອ່ອນນ້ອມຖ່ອມຕົນ, ຄວາມສັດຊື່, ແລະການເພິ່ງພາອາສັຍ. ສະປັດເປັນ ໝາສີຂາວທີ່ມີຈຸດສີນ້ຳຕານ ແລະ ສີດຳໃຫຍ່. ມັນຮັກພວກເຮົາຫຼາຍເທົ່າກັນກັບຄອບຄົວຂອງຂ້າພະເຈົ້າຮັກມັນ. ເບິ່ງຄືວ່າມັນເຂົ້າໃຈຄວາມສັມພັນນີ້ແທ້ໆ ແລະໄວ້ວາງໃຈໃຫ້ພວກເຮົາເບິ່ງແຍງມັນ. ເພື່ອເປັນການຕອບແທນ, ມັນໄດ້ເບິ່ງແຍງພວກເຮົາແລະປົກປ້ອງພວກເຮົາ.

ໂລກມີແນວຄິດທີ່ແຕກຕ່າງກັນກ່ຽວກັບຄວາມອ່ອນນ້ອມຖ່ອມຕົວ-ມັນແມ່ນຄວາມອ່ອນແອໃນສາຍຕາຂອງໂລກ. ທຸກໆຄັ້ງທີ່ລ້ຽວໄປ, ພວກເຮົາໄດ້ຮັບການສນັບສນຸນໃຫ້ "ຂີ່ສູງຢູ່ເທິງອານມ້າ" ("ride tall in the saddle") ໃນຂນະທີ່ເບິ່ງຄົນອື່ນຕ່ຳ(ດູຖູກ). **ພຣະເຈົ້າຊົງມີພຣະທັສນະທີ່ແຕກຕ່າງອອກໄປ.** ຄວາມອ່ອນນ້ອມຖ່ອມຕົວ-ການບໍ່ເຫັນແກ່ຕົວທີ່ເຮັດໃຫ້ພວກເຮົາມີຄວາມສັມພັນກ່ຽວຂ້ອງແລະໃກ້ຊິດກັນ-**ເປັນທີ່ພໍພຣະທັຍຂອງພຣະເຈົ້າ.** ຍິ່ງໄປກວ່ານັ້ນ, ພຣະຄັມພີຊົງເປີດເຜີຍວ່າພຣະເຈົ້າຊົງອວຍພຣະພອນພວກເຮົາເມື່ອພວກເຮົາອ່ອນນ້ອມຖ່ອມຕົວ. ດ້ວຍເຫດນີ້, ພຣະເຈົ້າໄດ້ຊົງຊຸກຍູ້ຄວາມອ່ອນນ້ອມຖ່ອມຕົວໃນລະຫວ່າງການປົກຄອງຂອງກະສັດໂຊໂລໂມນ ແລະໃນຊີວິດຂອງປະຊາກອນຂອງພຣະອົງ.

*ສັດລ້ຽງໃນຄອບຄົວທີ່ແປກປລາດທີ່ສຸດທີ່ທ່ານເຄີຍໄດ້ຍິນແມ່ນຫຍັງ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. 2 ຂ່າວຄາວ 7:1-3

1 ເມື່ອກະສັດໂຊໂລໂມນຈົບຄຳອະທິຖານຂອງພະອົງແລ້ວໄຟໄດ້ລົງມາຈາກຟ້າສວັນໄໝ້ເຄື່ອງເຜົາບູຊາແລະເຄື່ອງສັດບູຊາ ແລະພຣະ
ສງ່າຣາສີຂອງພຣະຜູ້ເປັນເຈົ້າກໍເຕັມພຣະວິຫານ 2 ປະໂລຫິດເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າບໍ່ໄດ້ ເພາະວ່າພຣະຣັສມີຂອງ
ພຣະຜູ້ເປັນເຈົ້າເຕັມພຣະວິຫານຂອງພຣະຜູ້ເປັນເຈົ້າ 3 ເມື່ອບັນດາຊົນຊາດອິສຣາເອນໄດ້ເຫັນໄຟລົງມາ ແລະພຣະຣັສມີຂອງພຣະຜູ້
ເປັນເຈົ້າຢູ່ເທິງພຣະວິຫານ ພວກເຂົາທັງຫລາຍກໍກົ້ມຂາບລົງເຖິງພື້ນດິນ ແລະໄດ້ນະມັສການສັນຣະເສີນພຣະຜູ້ເປັນເຈົ້າວ່າ "ເພາະພຣະ
ອົງຊົງປະເສີດເພາະຄວາມເມດຕາຂອງພຣະອົງດຳຣົງຢູ່ເປັນນິດ"

ພຣະຄັມພີ 2 **ຂ່າວຄາວ** ບັນທຶກເວລາແຫ່ງຄວາມສງົບແລະການເຊື່ອຟັງ ເມື່ອກະສັດໂຊໂລໂມນຣາຊໂອຣົດ(ລູກຊາຍ)ຂອງກະສັດດາວິດ ໄດ້ຊົງສ້າງພຣະວິຫານທີ່ຊາວ ອິສຣາເອນ ສາມາດນະມັສການພຣະເຈົ້າຂອງພວກເຂົາເຈົ້າ. ກະສັດໂຊໂລໂມນໄດ້ ດຳເນີນຊີວິດຕາມຄຳພະຍາກອນຂອງພຣະເຈົ້າໃນຖານະທີ່ເປັນກະສັດແຫ່ງຄວາມສງົບສຸກ. ຫຼັງຈາກການສິ້ນພຣະຊົນຂອງພຣະບິດາ(ພໍ່) ຂອງພຣະອົງ(ໂຊໂລໂມນ), ການປົກຄອງຂອງກະສັດໂຊໂລໂມນ ຖືວ່າເປັນການປ່ຽນແປງທາງວັດທະນະທັມຄັ້ງສຳຄັນຈາກສົງຄາມ. ດ້ວຍຄວາມຖ່ອມໃຈ. ພຣະອົງຊົງຍອມຮັບເສື້ອຄຸມຂອງກະສັດ, ແລະຜ່ານການອະທິຖານ ພຣະອົງໄດ້ຊົງສະທ້ອນເຖິງຄຸນຄ່າ ຂອງພຣະເຈົ້າ

ເມື່ອພຣະອົງໄດ້ຊົງທູນຂໍຕໍ່ພຣະເຈົ້າໃຫ້ມີ "ຄວາມສລຽວສລາດໃຫ້ຂ້ານ້ອຍແດ່ ຖ້າບໍ່ດັ່ງນັ້ນຂ້ານ້ອຍຈະບໍ່ສາມາດປົກຄອງປະຊາຊົນຂອງພຣະອົງຈຳນວນຫຼວງຫຼາຍຢ່າງນີ້ໄດ້."(1 ກສດ 3:9). ພຣະເຈົ້າໄດ້ຊົງປະທານສິ່ງທີ່ກະສັດໂຊໂລໂມນ ໄດ້ຊົງທູນຂໍ: ນັ້ນຄືສະຕິປັນຍາໃນການປົກຄອງປະຊາຊົນ. ແຕ່ພຣະເຈົ້າໄດ້ຊົງປະທານແກ່ກະສັດໂຊໂລໂມນຫຼາຍກວ່ານັ້ນອີກ. ສະຕິປັນຍາທີ່ກະສັດໂຊໂລໂມນຈະໄດ້ຮັບນັ້ນຈະເຮັດໃຫ້ພະອົງແຕກຕ່າງຈາກກະສັດອົງໃດໆຕລອດປວັດສາດຂອງຊົນຊາດອິສຣາເອນ. ຍິ່ງໄປກວ່ານັ້ນ, ພຣະເຈົ້າໄດ້ຊົງປະທານເຊັ່ນດຽວກັນສິ່ງທີ່ກະສັດໂຊໂລໂມນ ບໍ່ໄດ້ຊົງຂໍຮ້ອງ ສຳລັບທັງສອງຄື ຄວາມຮັ່ງມີແລະກຽດສັກສີ(ຂໍ້ 13).

ສະຕິປັນຍາໄດ້ນຳພາກະສັດໂຊໂລໂມນຜ່ານການສ້າງພຣະວິຫານ. ພະອົງໄດ້ສ້າງສະຖານທີ່ສຳລັບການຊົງປະທັບຂອງພຣະເຈົ້າທີ່ແຂ່ງຂັນກັບສິ່ງກໍ່ສ້າງໃດໆໃນໂລກໃນຍຸກສມັຍນັ້ນ. ພຣະວິຫານມີດ້ານໃນທີ່ປົກຄຸມດ້ວຍທອງຄຳບໍຣິສຸດ ແລະຫ້ອງຕ່າງໆດ້ວຍຝາເຮັດດ້ວຍໄມ້ໄຊປຣັສ(cypress wood). ພຣະວິຫານໄດ້ຖືກຕົກແຕ່ງດ້ວຍຕົ້ນປາລ໌ມ(palm)ແລະຕ່ອງໂສ້(chain) ປະດັບດ້ວຍແກ້ວປະເສີດ. ກະສັດໂຊໂລໂມນ ຍັງຊົງໄດ້ມີເຄຣຸບ(cherubim)ສອງຮູບຊຶ່ງພະອົງໄດ້ຊົງຫຸ້ມດ້ວຍທອງຄຳ (2 ຂຄ 3:1-4:22). ເມື່ອວຽກງານໄດ້ສຳເລັດແລ້ວ, ກະສັດໂຊໂລໂມນໄດ້ຊົງອຸທິດພຣະວິຫານໃຫ້ແກ່ພຣະເຈົ້າ. ການອຸທິດພຣະວິຫານນີ້ ບໍ່ພຽງແຕ່ກ່ຽວກັບການກໍ່ສ້າງອາຄານເທົ່ານັ້ນ, ແຕ່ກະສັດໂຊໂລໂມນແລະບັນດາປະຊາຊົນຕ້ອງການໃຫ້ພຣະກຽດຕິຍົດແກ່ພຣະເຈົ້າ. ທຸກຄົນໄດ້ຮ່ວມກັນຍ້ອງຍໍສັຣເສີນພຣະເຈົ້າ, ເພາະຄວາມສວຍງາມອັນລົ້ນເຫຼືອຂອງພຣະວິຫານ ແລະເພາະວ່າມັນເປັນການສະແດງອອກເຖິງຄວາມດີຂອງພຣະເຈົ້າແລະຄວາມຮັກຂອງພຣະອົງທີ່ມີຕໍ່ປະຊາຊົນຂອງພຣະອົງ. ກ່ອນທີ່ຜູ້ຄົນຈະສຳເລັດການນະມັສການ, ເມກໝອກກໍ່ເຕັມໄປທົ່ວພຣະວິຫານ. ແຕ່ມັນບໍ່ໄດ້ຢຸດເຊົາການສເລີມສລອງນັ້ນ.

ພວກເຮົາມັກບໍ່ຈື່ຈຳແລະຮັບຮູ້ວ່າ: **ພຣະຣັສມີພາບຂອງພຣະເຈົ້າເຕັມໄປທົ່ວແຜ່ນດິນໂລກ** (ອຊຢ 6:3). ພຣະເຈົ້າຊົງສະຖິດຢູ່ທົ່ວທຸກແຫ່ງຫົນ(Omnipresent God)-ຊົງຢູ່ທຸກແຫ່ງບໍ່ຂາດຈັກບ່ອນ! ດ້ວຍການເປີດເຜີຍນີ້ຢູ່ໃນໃຈຂອງພວກເຮົາ, ພວກເຮົາສົມຄວນທີ່ຈະຮັບຮູ້ຄວາມບໍ່ມີຄຸນຄ່າ(ບໍ່ສຳຄັນ)ຂອງພວກເຮົາຕໍ່ພຣະພັກ(ໜ້າ)ຂອງພຣະເຈົ້າ ແລະຖ່ອມຕົວຕອບສນອງຕໍ່ພຣະພັກຂອງພຣະເຈົ້າຄືກັນກັບບັນດາຊາວອິສຣາເອນ. ດ້ວຍຄວາມໂຄຣົບໂດຍຖ່ອມຕົນ, ພວກເຮົາສົມຄວນທີ່ຈະນະມັສການພຣະເຈົ້າຜູ້ຊົງສັນຍາວ່າຈະຊົງສະຖິດຢູ່ໃນບັນດາພວກເຮົາແລະໃນໃຈຂອງພວກເຮົາ.

*ພວກເຮົາຮຽນຮູ້ຫຍັງແດ່ກ່ຽວກັບສງ່າຣາສີຂອງພຣະເຈົ້າຈາກຂໍ້ພຣະຄັມພີເຫຼົ່ານີ້?*

## 2. 2 ຂ່າວຄາວ 7:12-16

*12 ແລ້ວພຣະຜູ້ເປັນເຈົ້າຊົງປະກົດແກ່ ໂຊໂລໂມນ ໃນເວລາກາງຄືນ ແລະກ່າວກັບພະອົງວ່າ "ເຮົາໄດ້ຍິນຄຳອະທິຖານຂອງເຈົ້າແລະໄດ້*
*ເລືອກສະຖານທີ່ນີ້ສຳລັບເຮົາໃຫ້ເປັນວິຫານແຫ່ງເຄື່ອງສັດບູຊາ 13 ຖ້າເຮົາປິດຟ້າສວັນບໍ່ໃຫ້ຝົນຕົກຫຼື ເຮົາບັນຊາໃຫ້ຕັກແຕນມາກິນແຜ່ນ*
*ດິນ ຫຼືສົ່ງພະຍາດລະບາດມາໃນທ່າມກາງປະຊາຊົນຂອງເຮົາ 14 ຖ້າປະຊາຊົນຂອງເຮົາຜູ້ທີ່ເອີ້ນອອກນາມຂອງເຮົານັ້ນຈະຖ່ອມຕົວລົງ*
*ແລະອະທິຖານ ແລ້ວສແວງຫາເຮົາແລະຫຼີກໜີຈາກທາງຊົ່ວຂອງຕົນ ເຮົາກໍຈະຟັງຈາກສວັນ ແລະຈະໃຫ້ອະພັຍແກ່ບາບຂອງຄົນນັ້ນ*
*ແລະຈະຮັກສາແຜ່ນດິນຂອງລາວໃຫ້ຫາຍ 15 ບັດນີ້ຕາຂອງເຮົາຈະມືນຢູ່ ແລະຫູຂອງເຮົາຈະຟັງຄຳອະທິຖານທີ່ເຂົາທັງຫຼາຍອະທິຖານ*
*ໃນສະຖານທີ່ນີ້ 16 ເພາະບັດນີ້ເຮົາໄດ້ເລືອກ ແລະເຮັດໃຫ້ວິຫານນີ້ເປັນບ່ອນບໍຣິສຸດເພື່ອນາມຂອງເຮົາຈະຢູ່ບ່ອນນັ້ນເປັນນິດ. ຕາຂອງ*
*ເຮົາແລະໃຈຂອງເຮົາຈະຢູ່ບ່ອນນັ້ນຕລອດເວລາ.*

ໃນພຣະຄັມພີປຶ້ມ **2 ຂ່າວຄາວ** ບົດທີ່ 7 ຂໍ້ 4-10, ກະສັດໂຊໂລໂມນ ແລະບັນດາຊາວອິສຣາເອນທັງໝົດໄດ້ໂຕ້ຕອບຕໍ່ພຣະສງ່າຣາສີແລະການຊົງສະຖິດຢູ່ນຳຂອງພຣະເຈົ້າໃນການນະມັສການ. ພຣະວິຫານໄດ້ຖືກສ້າງສຳເລັດແລ້ວ ແລະພຣະເຈົ້າຊົງພໍພຣະທັຍ. ພວກເຂົາເຈົ້າໄດ້ຖວາຍຄຳຍ້ອງຍໍສັຣເສີນ ແລະເຄື່ອງບູຊາເພື່ອອຸທິດສ່ວນຕ່າງໆຂອງພຣະວິຫານ. ຫຼັງຈາກເທສການສາມອາທິດ, ກະສັດໂຊໂລໂມນໄດ້ປະກາດການອຸທິດອັນຍິ່ງໃຫຍ່ນີ້ ແລະໄດ້ສົ່ງທຸກຄົນກັບເມືອບ້ານຂອງຕົນ. ການປົກຄອງຂອງກະສັດໂຊໂລໂມນ ໄດ້ເລີ່ມຕົ້ນດ້ວຍການໄປຢ້ຽມຢາມຫໍເຕັນທີ່ເມືອງກິເບໂອນ(tabernacle at Gibeon). ໃນເວລານັ້ນ, ກະສັດໂຊໂລໂມນໄດ້ອະທິຖານ, ຊົງ

ທູນຂໍ: *"ຂໍຊົງປະທານສະຕິປັນຍາ ແລະຄວາມຮູ້ແກ່ຂ້າພະອົງທີ່ຈະເຂົ້າບອກອອກໃນຕໍ່ໜ້າຊົນຊາດນີ້ເພາະມີຜູ້ໃດບໍທີ່ຈະພິຈາລະນາປະຊາຊົນຂອງພຣະອົງອັນຫລວງຫລາຍນັ້ນໄດ້"*. ພຣະເຈົ້າໄດ້ຊົງສະເດັດຢ້ຽມຢາມກະສັດໂຊໂລໂມນໃນຕອນກາງຄືນແລະໄດ້ໃຫ້ທຸກສິ່ງທຸກຢ່າງທີ່ພະອົງໄດ້ທູນຂໍຕໍ່ພຣະເຈົ້າ. ບັດນີ້ດ້ວຍການອຸທິດພຣະວິຫານ, ພຣະເຈົ້າໄດ້ຊົງຕອບສນອງຄຳອະທິຖານຂອງກະສັດໂຊໂລໂມນໃນແບບທີ່ຄ້າຍຄືກັນ. ໃນການຕອບໂຕ້ຂອງພຣະເຈົ້າ, ພຣະອົງຊົງມີພຣະປະສົງໃຫ້ກະສັດໂຊໂລໂມນຮູ້ວ່າພຣະອົງ(ພຣະເຈົ້າ)ຊົງໄດ້ຍິນຄຳອະທິຖານຂອງພະອົງ(ໂຊໂລໂມນ). ພຣະເຈົ້າອົງ "ສັບພັນຍູຮູ້ສາຣະພັດຢ່າງ"(Omniscient God) ຊົງສະດັບຮັບຟັງແລະຊົງໄດ້ຍິນຢູ່ສເມີໃນເມື່ອພວກເຮົາອະທິຖານ. <u>ພຣະອົງຊົງຮູ້ຄວາມນຶກຄິດ</u> ແລະ <u>ຫົວໃຈຂອງພວກເຮົາ</u>. ແຕ່ພຣະອົງເອງໄດ້ຊົງກ່າວວ່າມີບາງສິ່ງບາງຢ່າງທີ່ອາດມີຜົນກະທົບຕໍ່ການຊົງຕອບສນອງຂອງພຣະອົງ. ພຣະອົງຊົງກ່າວວ່າ: **"ຖ້າເຈົ້າເຮັດແບບນີ້, ເຮົາຈະເຮັດແບບນັ້ນ."** ຄຳຖແລງທີ່ມີເງື່ອນໄຂເຫຼົ່ານີ້ໄດ້ສ້າງພຣະສັນຍາດ້ານຈິດວິນຍານລະຫວ່າງພຣະເຈົ້າແລະບັນດາປະຊາຊົນຂອງພຣະອົງ. ພຣະເຈົ້າຈະຊົງປິ່ນປົວແຜ່ນດິນຂອງຊາວອິສຣາເອນ ຖ້າພວກເພິ່ນກົງຕາມເງື່ອນໄຂ 4 ປະການດັ່ງຕໍ່ລົງໄປນີ້:

**(1) ພວກເຂົາເຈົ້າ<u>ຕ້ອງ</u>ຖ່ອມຕົວລົງ**. ຄວາມຖ່ອມຕົວເປັນພຣະລັກສະນະຂອງພຣະຄຣິດ; ໃນຖານະເປັນຜູ້ຕິດຕາມຂອງພຣະອົງ, ພວກເຮົາໄດ້ຮັບການຊຸກຍູ້ໃຫ້ເປັນເໝືອນດັ່ງພຣະຄຣິດ(ຟລປ 2:1-4). **(2) ພວກເຂົາເຈົ້າ<u>ຕ້ອງ</u>ອະທິຖານ**. ພຣະເຈົ້າຊົງມີພຣະປະສົງໃຫ້ພຣະວິຫານເປັນສະຖານທີ່ຂອງການອະທິຖານ. ໂດຍຜ່ານການອະທິຖານທີ່ຖ່ອມຕົວ, ພຣະເຈົ້າໃນຄວາມເມດຕາຂອງພຣະອົງຈະຊົງຕອບສນອງຕໍ່ປະຊາຊົນຂອງພຣະອົງ. ດັ່ງນີ້, ໝາຍຄວາມວ່າພວກເຂົາເຈົ້າຄວນຮັກສາຄວາມຄາຣະວະຂອງພຣະເຈົ້າ ແລະຄວາມປາຖນາອັນຈິງໃຈທີ່ຈະດຳເນີນຊີວິດຕາມພຣະນາມຂອງພຣະອົງ. **(3) ພວກເຂົາເຈົ້າ<u>ຕ້ອງ</u>ສແວງຫາພຣະພັກ(ໜ້າ)ພຣະເຈົ້າ**. ຜູ້ຂຽນພຣະຄຳເພງສັຣເສີນໄດ້ຊັກຊວນວ່າ: *"ຈົ່ງສແວງຫາພຣະຜູ້ເປັນເຈົ້າ ແລະພຣະກຳລັງຂອງພຣະອົງ ສແວງຫາພຣະພັກຂອງພຣະອົງເລື້ອຍໆໄປ."* (ພສສ 105:4). ເມື່ອພວກເຮົາສແວງຫາພຣະພັກຂອງພຣະເຈົ້າ, ພວກເຮົາສແວງຫາທີ່ຈະຢູ່ໃນທີ່ປະທັບຂອງພຣະອົງ. ພຣະເຈົ້າຊົງຕ້ອງການຄວາມສັມພັນທີ່ບໍ່ຂາດຕອນກັບປະຊາກອນຂອງພຣະອົງ ເຊັ່ນດຽວກັນກັບທີ່ພຣະອົງກະທຳກັບພວກເຮົາ. ການຊົງສະຖິດຢູ່ນຳຂອງພຣະເຈົ້າຈະກາຍເປັນສິ່ງເຕືອນໃຈເຖິງຄວາມຮັກຂອງພຣະອົງຢູ່ສເມີ. **(4) ພວກເຂົາເຈົ້າ<u>ຕ້ອງ</u>ຫັນຫຼັງຈາກຄວາມຊົ່ວຮ້າຍຂອງພວກເຂົາເຈົ້າ**. ນີ້ເປັນເຣື່ອງໃຫຍ່ສຳລັບຊາວອິສຣາເອນທີ່ໄດ້ເຮັດບາບຕໍ່ພຣະເຈົ້າຊ້ຳແລ້ວຊ້ຳອີກ. ພຣະເຈົ້າຊົງໄດ້ປະທານທຸກສິ່ງແກ່ປະຊາກອນຂອງພຣະອົງ ແຕ່ພວກເພິ່ນປະຖິ້ມພຣະເຈົ້າຫຼາຍກວ່ານຶ່ງຄັ້ງ. ບັນດາຜູ້ທີ່ເຊື່ອບໍ່ມີພູມຕ້ານທານຈາກການເຮັດບາບ. ພວກເຮົາກໍ່ອາດຈະບໍ່ສັດຊື່ຕໍ່ພຣະເຈົ້າ, ແຕ່ຍ້ອນຄວາມຮັກອັນຍິ່ງໃຫຍ່ຂອງພຣະອົງທີ່ມີຕໍ່ພວກເຮົາ, ພຣະເຈົ້າຈະບໍ່ຊົງປະຖິ້ມພວກເຮົາໃຫ້ຖືກທຳລາຍໂດຍການເລືອກຂອງພວກເຮົາ. **ເຖິງຢ່າງໃດກໍ່ຕາມ, ມັນຮຽກຮ້ອງ ໃຫ້ມີການກັບໃຈໃໝ່ ແລະຫັນກັບຄືນໄປຫາພຣະອົງ.** **<u>ພຣະສັນຍາຂອງພຣະເຈົ້າບໍ່ໄດ້ປ່ຽນແປງ</u>.** ເງື່ອນໄຂທີ່ພຣະເຈົ້າໄດ້ຊົງວາງໄວ້ສຳລັບຊາວ ອິສຣາເອນ ແມ່ນເງື່ອນໄຂດຽວກັນກັບທີ່ພຣະອົງໄດ້ຊົງສເມີໃຫ້ພວກເຮົາໃນມື້ນີ້. ໂລກຂອງພວກເຮົາແລະ<u>ປະເທດທີ່ພວກເຮົາອາສັຍຢູ່ນີ້</u>ໄດ້ຖືກທຳລາຍໂດຍບາບ. ຜູ້ຄົນສ່ວນໃຫຍ່ໃນວັດທະນະທັມຂອງພວກເຮົາສແວງຫາການດຳເນີນຊີວິດວິທີໃດກໍ່ຕາມທີ່ພວກເພິ່ນຕ້ອງການ ແລະຖືກແຍກອອກຈາກພຣະເຈົ້າ. ແຕ່ວ່າຖ້າພວກເຮົາຖ່ອມຕົວລົງ, ອະທິຖານ, ແລະສແວງຫາພຣະພັກ(ໜ້າ)ຂອງພຣະເຈົ້າ <u>ເມື່ອພວກເຮົາຫັນໜີຈາກທາງຊົ່ວຂອງພວກເຮົາ</u>, <u>ແລ້ວພຣະເຈົ້າຈະຊົງໄດ້ຍິນແລະຊົງປິ່ນປົວແຜ່ນດິນນີ້</u>.

*ຈະເປັນແນວໃດສຳລັບປະເທດຊາດທີ່ຖ່ອມຕົວຕໍ່ພຣະພັກ(ໜ້າ)ພຣະເຈົ້າ?*

## 3. <u>2 ຂ່າວຄາວ 7:17-20</u>

*17 ສ່ວນເຈົ້າ, ຖ້າເຈົ້າດຳເນີນຊີວິດຕໍ່ໜ້າເຮົາຄືດາວິດພໍ່ຂອງເຈົ້າດຳເນີນນັ້ນ ໂດຍເຮັດຕາມທຸກສິ່ງທີ່ເຮົາໄດ້ບັນຊາແກ່ເຈົ້າ ແລະຮັກສາ*
*ກົດເກນຂອງເຮົາກັບຄຳຕັດສິນຂອງເຮົາ 18 ແລ້ວເຮົາຈະສະຖາປະນາຣາຊບັນລັງແຫ່ງອານາຈັກຂອງເຈົ້າດັ່ງທີ່ເຮົາໄດ້ເຮັດຄຳໝັ້ນສັນຍາ-*
*ໄວ້ກັບດາວິດພໍ່ຂອງເຈົ້າວ່າ "ເຈົ້າຈະບໍ່ຂາດຊາຍຜູ້ນຶ່ງທີ່ຈະປົກຄອງເໜືອອິສຣາເອນ" 19 ແຕ່ຖ້າເຈົ້າຫັນໄປ ແລະປະຖິ້ມກົດເກນຂອງເຮົາ*

*ກັບບັນຍັດຂອງເຮົາທີ່ເຮົາຕັ້ງໄວ້ຕໍ່ໜ້າເຈົ້າ ແລ້ວໄປບົວລະບັດພະອື່ນ ແລະນະມັສການພະເຫຼົ່ານັ້ນ* [20] *ເຮົາຈະຖອນຮາກພວກເຂົາທັງຫຼາຍຈາກແຜ່ນດິນຂອງເຮົາຊຶ່ງເຮົາໄດ້ໃຫ້ແກ່ພວກເຂົາ ແລະວິຫານຊຶ່ງເຮົາຊຳຣະໃຫ້ບໍຣິສຸດເພື່ອນາມຂອງເຮົານັ້ນ ເຮົາຈະໂຍນອອກໄປຈາກສາຍຕາຂອງເຮົາ ແລະເຮົາຈະເຮັດໃຫ້ເປັນເລື່ອງເວົ້າ ແລະເປັນທີ່ໝິ່ນປມາດທ່າມກາງຊົນຊາດທັງຫຼາຍ.*

ແຕ່ພຣະເຈົ້າໄດ້ຊົງປະກາດຢ່າງຊັດເຈນວ່າກະສັດໂຊໂລໂມນ**ຕ້ອງປະຕິບັດ**-ຖ້າຣາຊອານາຈັກຈະດຳເນີນຕໍ່ໄປ-ຕາມຄຳແນະນຳສະເພາະດັ່ງຕໍ່ລົງໄປນີ້: **(1) ຈົ່ງ**ດຳເນີນຊີວິດຕໍ່ພຣະພັກ(ໜ້າ)ພຣະເຈົ້າເໝືອນດັ່ງພະບິດາຂອງພະອົງ, ເດວິດ, ໄດ້ເຮັດ. **(2) ຈົ່ງ**ເຊື່ອຟັງສິ່ງທີ່ພຣະເຈົ້າຊົງບັນຊາ(ສັ່ງ)ໃຫ້ພະອົງ(ໂຊໂລໂມນ)ເຮັດ. **(3) ຈົ່ງ**ຮັກສາພຣະບັນຍັດ(ຄຳສັ່ງ)ຂອງພຣະເຈົ້າ.

ເງື່ອນໄຂເຫຼົ່ານີ້ເປັນການສ່ວນຕົວສຳລັບກະສັດໂຊໂລໂມນ. ພຣະເຈົ້າຊົງບອກກັບກະສັດໂຊໂລໂມນວ່າ: ຖ້າຫາກພະອົງເຮັດສິ່ງເຫຼົ່ານີ້, ຣາຊອານາຈັກຂອງພະອົງຈະຄົງຢູ່ຕລອດໄປ. ພຣະເຈົ້າໄດ້ຊົງໃຫ້ພຣະສັນຍາແກ່ກະສັດໂຊໂລໂມນ ສິ່ງດຽວກັນກັບທີ່ພຣະອົງໄດ້ຊົງໃຫ້ແກ່ກະສັດດາວິດ ຄື: "*ແລ້ວເຮົາຈະສະຖາປະນາຣາດຊະບັນລັງແຫ່ງອານາຈັກຂອງເຈົ້າດັ່ງທີ່ເຮົາໄດ້ເຮັດຄຳໝັ້ນສັນຍາໄວ້ກັບດາວິດພໍ່ຂອງເຈົ້າວ່າ: 'ເຈົ້າຈະບໍ່ຂາດຊາຍຜູ້ນຶ່ງທີ່ຈະປົກຄອງເໜືອອິສຣາເອນ'*" (ຂໍ້ 18). ແຕ່ພຣະເຈົ້າຍັງບໍ່ຊົງຢຸດທີ່ນັ້ນ. ພຣະອົງໄດ້ຊົງບອກຢ່າງຊັດເຈນວ່າ ກະສັດໂຊໂລໂມນແລະຣາຊອານາຈັກຂອງພະອົງຈະຖືກທຳລາຍຖ້າພະອົງຫັນຫຼັງໃຫ້ກັບພຣະເຈົ້າ (ບໍ່ເຊື່ອຟັງ). **ຄວາມບາບຈະຂັດຂວາງບໍ່ໃຫ້ພວກເພິ່ນມີຊີວິດຢູ່ຕໍ່ພຣະພັກພຣະເຈົ້າຜູ້ຊົງບໍຣິສຸດຂອງພວກເຂົາເຈົ້າ.**

*ພະເຈົ້າປະເພດໃດທີ່ຄົນຮັບໃຊ້ໃນທຸກວັນນີ້ ແທນທີ່ຈະຕິດຕາມພຣະເຈົ້າອົງທ່ຽງແທ້ພຽງພຣະອົງດຽວ?*

ໃນຊ່ວງຕໍ່ມາໃນສມັຍການປົກຄອງຂອງເພິ່ນ, ກະສັດໂຊໂລໂມນໄດ້ຊົງຍອມຖືກລໍ້ລວງ. ນີ້ເປັນຄຳເຕືອນສຳລັບພວກເຮົາທັງຫຼາຍເພາະພຣະເຈົ້າໄດ້ຊົງກຳນົດເງື່ອນໄຂທີ່ຊັດເຈນແຈ່ມແຈ້ງໄວ້ຢູ່ໃນພຣະວັຈນະ(ພຣະຄຳ)ຂອງພຣະອົງ. **ພວກເຮົາຈຳເປັນຕ້ອງເລືອກທີ່ຈະເຊື່ອຟັງພຣະຜູ້ເປັນເຈົ້າ ຖ້າຫາກພວກເຮົາມີຄວາມປາຖນາຈະໄດ້ຮັບພຣະພອນ.** ພຣະພອນຝ່າຍຈິດວິນຍານເຂົ້າມາສູ່ບັນດາຜູ້ທີ່ເພິ່ງພາອາສັຍແລະໄວ້ວາງໃຈໃນພຣະເຈົ້າ ພຣະອົງຜູ້ຊົງເຕັມປ່ຽມດ້ວຍຄວາມຮັກແລະດ້ວຍຄວາມສັດຊື່.

*ຄຳສັນຍາແລະຄຳເຕືອນເຫຼົ່ານີ້ບັງຄັບໃຫ້ພວກເຮົາອະທິຖານເພື່ອຄຣິສຕະຈັກແລະປະເທດຊາດຂອງເຮົາແນວໃດ?*

## ນຳໃຊ້ໃນຊີວິດ:

ພຣະເຈົ້າຊົງອວຍພຣະພອນແກ່ບັນດາຜູ້ທີ່ສແວງຫາພຣະອົງດ້ວຍຄວາມຖ່ອມຕົວ. ຈົ່ງໃຊ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງອ່ອນນ້ອມຖ່ອມຕົວ.** ໂອບກອດເອົາທ່າທີຂອງຄວາມຖ່ອມຕົວໃນຄວາມສັມພັນຂອງທ່ານກັບພຣະເຈົ້າ. ຈົ່ງຮັບຮູ້ຄວາມບໍ່ສົມບູນແບບຂອງຕົນເອງ ແລະຮັບຮູ້ການເພິ່ງພາອາສັຍຂອງທ່ານຕໍ່ພຣະເຈົ້າ.
- **ຈົ່ງອະທິຖານ.** ຈົ່ງເຮັດໃຫ້ການອະທິຖານເປັນຄວາມສຳຄັນອັນດັບນຶ່ງໃນຊີວິດປະຈຳວັນຂອງທ່ານ. ຈົ່ງສແວງຫາການຊົງສະຖິດຢູ່ນຳຂອງພຣະເຈົ້າ, ການຊົງນຳພາ, ແລະພຣະປະສົງຂອງພຣະອົງສຳລັບຊີວິດຂອງທ່ານໃນທຸກສະຖານະການ.
- **ຈົ່ງເຊື້ອເຊີນ.** ຈົ່ງໜູນໃຈຄົນອື່ນໃຫ້ມາຮ່ວມເດີນທາງກັບທ່ານໃນຄັ້ງນີ້. ຈົ່ງອອກໄປເພື່ອສເນີໃຫ້ກຳລັງໃຈໃນການຮັກສາຄວາມເຊື່ອ. ຈົ່ງຮ່ວມກັນສແວງຫາທີ່ຈະປະສົບກັບພະລັງງານການປ່ຽນແປງຂອງການອະທິຖານທີ່ຖ່ອມຕົວແລະການອຸທິດຕົນຢ່າງຈິງໃຈຕໍ່ພຣະເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**